# ລົງໂທດແມງວັນ



# ລີງໂທດແມງວັນ

ລູງຕາເວັນຄືຕື່ນແຕ່ເຊົ້າແທ້! ແສງຕາເວັນເຈືອຈານໄປທົ່ວທ້ອງຟ້າໜ້າດິນ, ສາຍລົມໜາວຕົ້ນລະດູໂຮຽນມາເປັນຄັ້ງໆ. ນ້ຳໝອກຄ້າງ ຕ້ອງແສງແດດເຫຼື້ອມຍິບຍັບ ປະກົດວ່າສວນດອກໄມ້ໄດ້ປະດັບດ້ວຍເພັດດ້ວຍແກ້ວ, ດວງດອກໄມ້ໃນສວນໜ້າບ້ານໂອ່ນໄປອ່ຽງມາ ເໝືອນດັ່ງເຂົາມ່ວນຊື່ນພ້ອນເຕັ້ນຕາມສຽງຂັບສຽງລຳຂອງອ້າຍຜູ້ບາງເຍີ້ງ.

ປານນັ້ນ ແມງວັນກໍ່ຍັງບໍ່ທັນຕື່ນນອນ! ເປື້ອນເປິະກໍ່ພໍແຮງແລ້ວ, ພັດນອນຕື່ນສວາຍອີກ, ຄັນລູງຕາເວັນຮູ້ວ່າຢູ່ໃນໜ່ວຍໂລກດວງຊຽວງາມນີ້ ພັດມີຜູ້ຢູ່ເປື້ອນກິນເປື້ອນຄືແມງວັນແມ່ນລາວບໍ່ພໍໃຈຈັກດີ້, ລູງຕາເວັນຊັງຄົນເປື້ອນເປິະທີ່ສຸດ. ນັ້ນກໍ່ຍ້ອນວ່າລາວເປັນຜູ້ເອົາໃຈໃສ່ຢ່າງປົກກະຕິ

ໃນການປະດັບເອ້ຍ້ອງໃຫ້ໜ່ວຽໂລກສວຽງາມແລະສະອາດດີ.

ໃນທີ່ສຸດແມງວັນກໍ່ຕື່ນ, ມັນມືນຕາຂຶ້ນກໍ່ຮູ້ສຶກຫິວທ້ອງພ້ອມບາດ. ມັນບິນອອກນອກຊານ, ໄຕ່ໄປໄຕ່ມາເຫັນໄສ້ໄກ່ກອງເອາະເຍາະເທິງຂຽງ,ພວກແມງວັນພາກັນຕອມໂພ່ງຢູ່. ຄັນຄືຊູ່ມື້ແມ່ນມັນເຈີດໃສ່ໂລດ, ເພາະມັນຮູ້ຄັກວ່າໄສ້ໄກ່ກໍ່ຄືຊີ້ນໝູເນົ່າປາເໜັນເປື້ອນເປິະຕ່າງໆ ກໍ່ລ້ວນແຕ່ມີລົດແຊບສະເພາະ, ແຕ່ມື້ນີ້ມັນບໍ່ກິນດອກຂອງເປື້ອນແນວນັ້ນ,ເພາະວານນີ້ມັນ ໄດ້ຄຸຽກັບໝູ່ແລ້ວວ່າມັນຊິ່ ໄປກິນນ້ຳເຜິ້ງທັງແຊບທັງຫວານພັດມີອາຍຸຍືນອີກ. ເຫັນໄສ້ໄກ່ມັນຢາກຢູ່,ແຕ່ບໍ່ຍອມເສຽກຽດ. ມັນພືປີກບິນໄປຊອກຫາຮັງເຜິ້ງຢ່າງຮີບດ່ວນ.

ບິນໄປໄດ້ເຫິງເຕີບ, ເມື່ອຽແຮງ, ແຕ່ມັນກໍ່ອົດສາບິນ, ມັນພວມປະຕິບັດ«ຄຳສັ່ງ»ຂອງທ້ອງ, ມັນເຄີຽເວົ້າວ່າ: «ຄຳສັ່ງທີ່ຄວນປະຕິບັດຢ່າງຮີບຮ້ອນນັ້ນ ແມ່ນຄຳສັ່ງຂອງທ້ອງ; ຫິວແມ່ນຕ້ອງກິນ...»ມີບາງຄົນບໍ່ຮູ້ວ່າຄຳເຫັນຂອງແມງວັນເວົ້າແນວນັ້ນຈັກຖືກບໍ່ຫຼືຜິດ, ແຕ່ຕໍ່ສະເພາະພວກເຮົາໃຜຊິ່ບໍ່ຮູ້ວ່າຍັງມີຄຳສັ່ງທີ່ສຳຄັນອີກຫຼາຽຢ່າງ ແລະ ຕ້ອງປະຕິບັດ

ຢ່າງຮີບຮ້ອນແຕ່ຫາກບໍ່ແມ່ນຄຳສັ່ງຂອງທ້ອງດອກ. ໃຜຊິບໍ່ຮູ້ວ່າບໍ່ມີໃຜມັກກິນລື່ນແມງວັນ, ທັງຫຼາຍເຂົາກິນເພື່ອໃຫ້ມີຊີວິດ, ມີຊີວິດເພື່ອເຮັດວຽກເຮັດງານຮັບໃຊ້ຊາດຮັບໃຊ້ປະຊາຊົນ. ແຕ່ແມງວັນ, ແມງວັນມີຊີວິດເພື່ອກິນ, ພາງຄວາມວ່າ. ກິນມື້ນີ້ເພື່ອໃຫ້ໄດ້ກິນອີກໃນມື້ໜ້າຕໍ່ໆໄປ, ມືນຕາຂຶ້ນມັນຊອກຫາກິນ, ຫຼັບຕາລົງມັນຝັນໄດ້ກິນ. ທຸກການກະທຳຂອງມັນແມ່ນເພື່ອຈຸດປະສົງອັນດຽວຄື: ອີ່ມທ້ອງເທົ່ານັ້ນ, ກໍ່ຍ້ອນແນວນັ້ນແລ້ວມັນຈຶ່ງວ່າຄຳສັ່ງຂອງທ້ອງສຳຄັນ.

ບິນຕາມບິນກໍ່ຮອດຮັງເຜິ້ງ ແຂວນເປັນປ່ຽງໃຕ້ງ່າໄມ້, ໝູ່ເຜິ້ງໂອບຮັງຢູ່ຂຸບໆໂຕໄຕ່ເຂົ້າໄຕ່ອອກ, ໂຕບິນຂຶ້ນບິນລົງຢູ່ຫືດໆ, ແມງວັນບໍ່ຮູ້ຈະເຂົ້າທາງໃດ, ມັນອຸກໃຈເມື່ອແນມເຫັນຂໍ້ຫຍຸ້ງຍາກນັ້ນ, ສ່ວນທ້ອງກໍ່ເລັ່ງຢູ່ຕຶກໆ, ນ້ຳຫົວເຜິ້ງກໍ່ປະກົດວ່າຍິ່ງຫອມ, ລົດຫວານຂອງນ້ຳຫົວປຸກຄວາມໂລບມາກມັກກິນຂອງມັນໄດ້ລຸກຂຶ້ນຢ່າງຮຸນແຮງ.

ໃນຊີວິດແມງວັນ, ເລື່ອງລັກກິນກາຍເປັນອາຊີບແລ້ວ, ມັນລັກຕໍ່ໜ້າເຈົ້າຂອງ, ແຕ່ກໍ່ບໍ່ເຄີຍຖືກຈັບຈັກເທື່ອ. ພິດຢ່າງ

ກໍ່ຖືກໄລ່, ໄລ່ກໍ່ບິນຂຶ້ນ, ແລ້ວຕອມອີກ, ຕອນຄາວໜຶ່ງກໍ່ໄດ້ຕື່ນໜັງໜຶ່ງຫຼາຍເທື່ອກໍ່ເປັນຫຼາຍ.

ຄືດຢູ່ຄາວໜຶ່ງ, ແມງວັນເຊື່ອວ່າກິນໄດ້ຊັ່ງຊາຕຶກຕອງພໍແຮງແລ້ວ, ເລີຍພິປີກບິນອ້ອມຮັງເຜີ້ງຮອບໜຶ່ງແລ້ວສັກໃສ່ນໍ້າຫົວ. ບໍ່ເຄີຍມີໃຜເຂົ້າໄປຮັງເຜີ້ງ ຈື່ກັບມາໄດ້ຈັກເທື່ອ, ແມ່ນແທ້! ພໍປີງກິນລົງຮັງເຜີ້ງ, ທັນໃດນັ້ນໝູ່ເຜີ້ງກໍ່ແຕກຍ່າວອອກປິດລ້ອມ, ສ່ວນໜຶ່ງກໍ່ຫຸ້ມພິກໃສ່ແມງວັນ ທັງຮ້ອງກັນແຊວໆ ວ່າ

— ຈັບມັນ! ຈັບມັນ!

ແມງວັນຕົກສະເງີ້, ຍ້ອນມັນບໍ່ຄິດວ່າເຫດຮ້າຍຈະເປັນໄປດັ່ງນີ້, ມັນຍອມໃຫ້ໝູ່ເຜີ້ງຈັບທັງບີບທັງໄຫ້ວ, ສັ່ນທິດໆທ່າວໆ, ພໍດີມີເຜີ້ງໂຕໜຶ່ງຮ້ອງຂຶ້ນ:

— ຕາຍ! ກິນໂຕມັນເປື້ອນທີ່ສຸດໝູ່ເອີຍ, ເບິ່ງແມ່ຕິດໂຕເຮົາໝົດ, ມັນໄປເຮັດຫຍັງມາເປື້ອນແທ້? ຕ້ອງພາມັນໄປອາບໄປສ່ວຍກ່ອນຈຶ່ງໄປໃຫ້ເຜີ້ງນາງ.

ເມື່ອໄດ້ຍິນແນວນັ້ນໃຜໆ ກໍ່ແນມເບິ່ງໂຕເຈົ້າຂອງ. ເຜີ້ງ

ໂຕໃດກໍ່ເປື້ອນໝົດທັງໂຕ, ຈັກເໝັນຈັກລາວ, ແມງວັນຖືກ ຮ້າງດ່າສຳມະປີ, ຖືກເຂົາຄຸມໄປລ້າງໄປສ່ວງສັກແນ່ແລ້ວເອົາ ໄປມອບໃຫ້ເຍົ້າບາງ.

ແມງວັນຢືນຕໍ່ໜ້າເຍົ້າບາງ. ສອງເບື້ອງແມ່ນບັນດາເຍົ້າ ຢືນເປັນແຖວສັກແນ່. ເຖິງວ່າໄດ້ອາບສ່ວງພໍແຮງ, ແຕ່ຢືນ ໃກ້ແມງວັນກໍ່ຍັງຕ້ອງອັດດັງ, ແມງວັນຢືນກົ້ມໜ້າ, ຈັກວ່າມັນ ອາຍບໍ່ຫຼືຢ້ານ? ນັກຂັບຍົນອາເມລິກາ, ເມື່ອຖືກພວກເຮົາ ຈັບມັນກໍ່ບໍ່ຫານເງີຍໜ້າຂຶ້ນຄືກັນນີ້ແຫຼະ!

ເມື່ອເຍົ້າບາງຖາມວ່າ

— ຊື່ມຶງວ່າແນວໃດ? ບ້ານເກີດເມືອງນອນຂອງມຶງຢູ່ ໃສ? ແມງວັນຕອບດ້ວຍຄວາມຢ້ານກົວວ່າ

— ຂະນ້ອຍຊື່ວ່າແມງວັນດຳ...

ແມງວັນເວົ້າບໍ່ທັນສຸດ, ສຽງຫົວບັນຂຶ້ນເຍົ້າບາງຜູ້ເປັນ ເຈົ້າຮັງກໍ່ຫົວຄືກັນ. ຫົວຍ້ອນນາມສະກຸນອັນປະຫຼາດ ຂອງ ມັນ. ໄດ້ຍິນເຂົາຫົວແຊວຂຶ້ນແນວນັ້ນແມງວັນກໍ່ປະຫຼາດໃຈ ຄືກັນ, ມັນເງີຍໜ້າເບິ່ງໄປທົ່ວຫ້ອງ, ບໍ່ເຂົ້າໃຈວ່າເຂົາຫົວ

ຫຼັງກັບ. ເມື່ອຮູ້ວ່າເຂົາຫົວຂວັນຕົນແລ້ວກໍ່ແຮ່ງກົ້ມໜ້າອີກ ຕື່ມ. ເຜິ້ງບາງຖາມອີກວ່າ

— ເປັນຫຍັງຈຶ່ງມີນາມສະກຸນ ເປັນແນວນັ້ນ, ຈັ່ງໃດ? ໃຫ້ການບໍ່ຖືກແມ່ນຈະໄດ້ຮັບໂທດໜັກກ່ວາເກົ່າໄດເນີ.

ທັງຢ້ານ, ທັງຢາກເວົ້າໃຫ້ໝູ່ເຜິ້ງເຊື່ອ, ແມງວັນກະວົນ ກະວາຍບໍ່ຮູ້ຈະເຮັດແນວໃດ; ມັນຕັ້ງໃຈໃໝ່ແລ້ວເວົ້າ:

— ບໍ່! ຂະນ້ອຍເວົ້າຕົວະໃຫ້ພາຜ່າຫົວກໍ່ໄດ້. ມັນອ້າງເຫດ ອ້າງຜົນວ່າ: ແມງວັນມີຢູ່ທຸກບ່ອນ, ຢູ່ບ້ານກໍ່ຫຼາຍ, ຢູ່ປ່າກໍ່ ມີ, ແມງວັນທັງໝົດນັ້ນ ບໍ່ແມ່ນຊະນິດດຽວ, ໃນເຊື້ອຊາດ ແມງວັນພວກຂະນ້ອຍມີຫຼາຍ ຊະນິດ? ບັບແຕ່ເຫຼືອດມັກຢູ່ນຳ ງົວ, ນຳມ້າເພື່ອອາໄສກິນເລືອດສັດເຫຼົ່ານີ້, ມາເຖິງແມງວັນ ຂຽວ ແລະ ແມງວັນເຫຼືອງ, ມັນຂົບເຈັບ ແລະ ເລືອດອອກ. ນອກນັ້ນ ຍັງມີຊະນິດໜຶ່ງອີກ, ແມງວັນຊະນິດນີ້ ຖ້າຂົບໃຜ ແມ່ນສິ່ງພະຍາດນອນໃຫ້ຜູ້ນັ້ນ, ພະຍາດນອນແມ່ນພະຍາດ ຊະນິດໜຶ່ງ ທີ່ເຮັດໃຫ້ລົບຜູ້ຖືກພະຍາດ ນັ້ນມີແຕ່ຢາກນອນ, ແມງວັນຊະນິດນີ້ຢູ່ທະວີບອາຟາລິກກາແມ່ນມີຫຼາຍ.

ມັນເວົ້າຢ່າງລ່ຽນໄຫຼກ່ຽວກັບເຊື້ອຊາດຍາດວົງແມງວັນຂອງມັນ, ເວົ້າຈົນເກືອບຫາງໃຈບໍ່ທັນ, ຢຸດຢູ່ຄາວໜຶ່ງມັນເວົ້າຕໍ່:

— ສ່ວນຂະນ້ອຍເອງ, ຊື່ວ່າ «ແມງວັນ», ນາມສະກຸນແມ່ນ «ດຳ»? ວົງຕະກຸນພວກຂະນ້ອຍມີຊີວິດຕິດພັນກັບບ້ານເມືອງ, ຫາກິນຕາມເຮືອນຊານ, ຕາມໝໍ້ແຫກ, ຖ້ວຍບ່ວງ, ບິນເວີ່ນຊົມຂອງກິນແຊບໃນພາເຂົ້າ, ຕອມວິດຖ່າຍ, ຂີ້ສີກ, ໄປທ່ຽວຕາມຕະຫຼາດ, ຫາກິນຕາມວັດວາຕ່າງໆ... ກໍ່ຍ້ອນຂະນ້ອຍ ດຳລົງຊີວິດພົວພັນ ຕິດແທດກັບຄົນໃນຄອບຄົວເຮືອນຊານ, ສະນັ້ນຂະນ້ອຍຈິ່ງມີຊື່ວ່າ «ແມງວັນດຳ», ເວົ້າລວມແລ້ວເຊື້ອຊາດຂອງພວກຂະນ້ອຍລວມມີ 5 ຊະນິດ, ໃນ 5 ຊະນິດນັ້ນ, ຄັນຊິເວົ້າແທ້ກໍ່ແມ່ນ ວົງຕະກຸນ ແມງວັນດຳນີ້ແລ້ວດີກ່ວາໝູ່, ບໍ່ຂີບ, ບໍ່ກັດໃຜ, ມີແຕ່ຫາກິນລ້ຽງຊີບ.

ເຜິ້ງນາງຍິ້ມບາດໜຶ່ງທັງຖາມ:

— ແຕ່ກະເປືອນກ່ວາໝູ່ແມ່ນບໍ?

ແມງວັນບໍ່ປາກ.

ເຫັນແມງວັນກົ້ມນິດຢູ່, ເຜີ້ງນາງເລີ່ຽຖາມຫາພໍ່ແມ່ອ້າຽນ້ອງ, ຖາມບ້ານເກີດເມືອງນອນຂອງແມງວັນ. ມັນຄຶດດົນເຕີບ, ແລ້ວເວົ້າສຽງເສົ້າໆ ວ່າ

— ເວົ້າຄວາມຊື່ແຕ່ເກີດມາ ໃຫ່ຽຕຶງປານນີ້ ຂະນ້ອຍເອງກໍ່ບໍ່ທັນຄຶດຫາພໍ່ຫາແມ່ຈັກເທື່ອ. ສ່ວນອ້າຽນ້ອງນັ້ນ ມີຫຼາຽຢູ່, ຫຼາຽຈົດຈື່ບໍ່ໄດ້, ລອງໄລ່ເບິ່ງເດີ: ແມ່ຂະນ້ອຍໄຂ່ 6 ຊຸດ, ໄຂ່ຊຸດໃດບໍ່ແມ່ນອອກເທື່ອໜ່ວຽຄືໄຂ່ໄກ່, ໃນຊຸດໜຶ່ງແມ່ຂະນ້ອຍໄຂ່ໄດ້ 150 ໜ່ວຽຄືຈັ່ງຊັ້ນທັງໝົດ 6 ຊຸດມາລູບເບິ່ງແມ່ນເປັນ 900 ໜ່ວຽ, ໃນ 900 ໜ່ວຽຈະກາຽເປັນໜອນ 900 ໂຕ ແລະກາຽເປັນແມງວັນ 900 ໂຕ.

ເຜີ້ງນາງຖາມຕື່ມວ່າ

— ໂອ໋! ຄັນແມ່ເຈົ້າບໍ່ຕາຽອ້າຽນ້ອງເຈົ້າຄືຊິຮອດພັນພຸ້ນແລ້ວບໍ?

— ບໍ່! ຄັນແມ່ຂະນ້ອຍບໍ່ຕາຽກໍ່ບໍ່ໄຂ່ອີກດອກ, ຊຸດພວກຂະນ້ອຍແມ່ນຊຸດສຸດທ້າຽ, ຊຸດທີ່ 6, ຊາດແມງວັນພວກຂະນ້ອຍໃຜໄຂ່ໄດ້ 6 ຊຸດແມ່ນນັບກັນວ່າແຂງແຮງ, ໃຜຢືນໄດ້ 20 ປີນັບ

24/VII

ວ່າບຸນຄ້ຳນ້ຳຊູແລ້ວ.

ເຜີ້ງນາງຫົວງຶ້ນ:

— ໂທ! ມຶງຕົວະໄດ້ຕົວະດີແທ້ບໍ, ທຳມະດາການກິນການຢູ່ສະອາດສຸຂະພາບຈຶ່ງແຂງແຮງ, ສຸຂະພາບແຂງແຮງຈຶ່ງໝັ້ນຈຶ່ງຍືນໄດ້, ສັດບັງໆ ຄືຊາດມຶງບໍ່ພຽງແຕ່ຢູ່ກິນເປື້ອນເປິະພັດກິນບໍ່ມີເວລົມເວລາຍັງຍືນຮອດ 20 ປີພຸ້ນຫວະ?

— ບໍ່! 20 ປີໝາຽຄວາມວ່າ 20 ວັນຫັ້ນດອກ. ແຕ່ໃນຕົວຈິງກໍ່ມີແມງວັນສ່ວນໜັງດອກຊິຍືນເຖິງ 20 . . . ວັນ.

ເຜີ້ງນາງງຶກຫົວສະແດງວ່າເຂົ້າໃຈແລ້ວຖາມຕໍ່:

— ເອີາ! ເວົ້າຕໍ່, ບ້ານເກີດເມືອງນອນມຶງຢູ່ໃສ?

ແມງວັນຕອບທັນທີວ່າ

— ບໍ່ຈັກວ່າອ້າຽເອື້ອຽຂະນັງເກີດຢູ່ໃສ? ແຕ່ຂະນັງເອງແມ່ນເກີດໃນຊາກໄກ່ນັງຕາຽຢູ່ແຈຮົ້ວ, ແມ່ຂະນັງມັກໄປກິນຊາກໄກ່ຊີ້ນເນົ່າປາເໝັນ, ແມ່ຂະນັງເລີ້ຽປະສູດພວກຂະນັງຢູ່ຫັ້ນ, ຍາມນັ້ນອາກາດຮ້ອນ, ສະນັ້ນພໍອອກຕອນເຊົ້າ, ຕອນແລງມາກໍ່ໃຫ່ງເປັນໜອນຮູ້ຕົງຍຸບໆ ກະນັບແຕ່ມື້ອອກ

ເປັນໄຂ່ພຸ້ນແມ່ຂະນັ້ຍບໍ່ໄດ້ມາຫຼ່ຳມາແລຈັກເທື່ອ. ສ່ວນອ້າຽເອື້ອຽນ້ອງພວກຂະນັ້ຍກໍ່ຢູ່ນຳກັນ. ບໍ່ມີໃຜຄິດຮອດພໍ່ຮອດແມ່, ຊິວິນນຳພໍ່ນຳແມ່ເຮັດຫຽັງ, ຂອງກິນກໍ່ມີແລ້ວ, ຊີ້ນໝູເນິ່າຫັ້ນແຫຼະລ້ຽງດູພວກຂະນັ້ຍ. ເອື້ອຽອ້າຽນ້ອງພວກຂະນັ້ຍໃຫຽ່ໄວທີ່ສຸດ, ພໍໄດ້ມື້ເບິ່ງໃຜກໍ່ພີອ້ວຽລ້ວຽຢູ່, ໝົດ 7 ມື້ແມ່ນໝົດກຳນົດເປັນໜອນ, ພວກຂະນັ້ຍພາກັນໝົ້ນລົງດິນຜົງ, ໄປຫຼາຽແຕ່ງຫຼາຽທົບນັບແຕ່ມື້ນັ້ນອ້າຽເອື້ອຽນ້ອງພວກຂະນັ້ຍພັດພາກຈາກກັນຈົນເຖິງຊູ່ມື້ນີ້.

ໝູ່ເຜິ້ງທັງຮັງຕັ້ງໃຈຟັງຢ່າງມິດງຽບ,ໃຜຕ່າງກໍ່ປວດຮາກເມື່ອໄດ້ຍິນແມງວັນ ເວົ້າເຖິງການກິນຂອງມັນ, ເຂົາເຈົ້າຄິດ: ຕາຽ! ສັງມາເປື້ອນປານນັ້ນແທ້? ທ້າວເຜິ້ງສະໝຽນນັ່ງກົ້ມຫົວຈົດເອົາແທ້ເອົາວ່າ, ຈົນບໍ່ມີເວລາເງີຽໜ້າຂຶ້ນເບິ່ງແມງວັນ. ແມງວັນມິດຢູ່ຄາວໜຶ່ງ, ສຽງສົນທະນາຂອງໝູ່ເຜິ້ງວິນຂຶ້ນ, ໃຜໆກໍ່ສົນໃຈໃນບັນຫານີ້ຈຶ່ງເລັ່ງໃຫ້ແມງວັນເວົ້າຕໍ່. ສ່ວນແມງວັນເຫັນໝູ່ເຜິ້ງເອົາໃຈໃສ່ແລະມີຄວາມສົນໃຈຢາກຊອກຮູ້ແນວນັ້ນກໍ່ເປັນການອົບອຸ່ນຈິດໃຈມັນສ່ວນໜຶ່ງ, ເຫັນ

ຕົນມີທ່າດີ, ນິດໄສເຄີຍທະເຍີທະຍານນັ້ນກໍ່ເລີຍຊວນໃຫ້ມັນ ລືມສາວ່າຕົນເປັນນັກໂທດ, ມັນເງີຍໜ້າຂຶ້ນກວາດສາຍຕາ ໄປທົ່ວຫ້ອງ, ຍືດເອິກເວົ້າບາດຊ້າງຄືອະທິບາຍບົດຮຽນວ່າ:

— ຄວາມຈິງເປັນຄືແນວເວົ້າມາແທ້, ໝາຍຄວາມວ່າ ແມງວັນແມ່ນເກີດມາຈາກໜອນໃຜກໍ່ເຄີຍເຫັນໜອນແລະກໍ່ ເຄີຍເຫັນແມງວັນ, ແຕ່ໜ້ອຍຄືນດອກສິນໃຈວ່າເປັນໜອນ ແລ້ວກາຍເປັນຫຼັງອີກຕໍ່ໄປ, ຄິດວ່າໜອນນ້ອຍແລ້ວໜອນໃຫຍ່ ຂຶ້ນ, ໜອນເຖົ້າແລ້ວໜອນກໍ່ຕາຍຄືສັດອື່ນໆ, ແລະກໍ່ຄິດວ່າ ແມງວັນກໍ່ເກີດຈາກໄຂ່ແມງວັນ, ແຕ່ບໍ່ຮູ້ວ່າມັນເກີດແນວ ໃດແມງວັນແມ່ກໍ່ຟັກໄຂ່ຄືໄກ່ນີ້ບໍ່? ແລະກໍ່ບໍ່ຮູ້ວ່າແມງວັນກັບ ໜອນມີການພົວພັນກັນແນວໃດ. ຄວາມລັບອັນນີ້ຍັງມີຫຼາຍ ຄົນບໍ່ທັນຮູ້, ນັ້ນກໍ່ຍ້ອນວ່າບໍ່ທັນມີໃຜແນມເຫັນເມື່ອໜອນປິ່ງ ຕົນກາຍເປັນແມງວັນໂຕດຳໆໂຕຂຽວໆຈັກເທື່ອ, ນັ້ນກໍ່ຍ້ອນ ວ່າໜອນໄປ«ບຳເພັນ»ຕົວໃຫ້ກາຍເປັນແມງວັນຢູ່ໃຕ້ດິນພຸ້ນ, ແລ້ວຈຶ່ງໝົ້ນຂຶ້ນມາ. ໃນໄລຍະຢູ່ໃຕ້ດິນພວກຂະນ້ອຍບໍ່ກິນບໍ່ ຫຼົ້າ, ບໍ່ເໜັງບໍ່ຕິງຫຼັງໝົດ. ນອນຢູ່ໃນປົ້ແຂງ, ພວກຂະນ້ອຍ

ບໍ່ງື້ຜິນຕົກລົມປົວ, ນອນຢູ່ຢ່າງອຸ່ນອຽນໃນສາມມື້, ຕາມທຳມະດາແມ່ນສາມວັນກາຽເປັນແມງວັນ, ແຕ່ກໍ່ອາດຈະຢູ່ໃຕ້ດິນດົນກ່ວານັ້ນອີກກໍ່ໄດ້, ສ່ວນຫຼາຽແມ່ນໃນລະດູໜາວແມງວັນພວກຂະນັ່ງຫົນໜາວບໍ່ໄດ້. ຮອດຍາມໜາວແມ່ນຕາຽໜາວໝົດແຕ່ຄວາມຈິງກໍ່ມີອັນເປັນຕາຢ້ານ, ບໍ່ແມ່ນຢ້ານອຶດຢ້ານຫິວຫຽັງດອກ, ມີແຕ່ຢ້ານເຂົາຖອກນ້ຳຮ້ອນ, ຖອກຂີ້ເຖົ່າຖ່ານຮ້ອນຫຼືຢາ 'ດດຕ' ໃສ່ເທິງບ່ອນພວກຂະນັ່ງພວມຢູ່ນັ້ນແມ່ນຕາຽຄັກ. ມີບາງເທື່ອພັດຄິດຢ້ານເຂົາເຈົ້າຕຳດິນບ່ອນນັ້ນລົງໃຫ້ແໜ້ນ, ພວກຂະນັ່ງໝົ້ນຂຶ້ນບໍ່ໄດ້ກໍ່ຕາຽອີກຄືກັນ, ເວົ້າລວມແລ້ວແມ່ນຢ້ານຕາຽກ່ອນເມື່ອໄດ້ເກີດເປັນແມງວັນ, ຕາຽແນວນັ້ນແມ່ນຕາຽເປັນຊຸດພ້ອມບາດ, ຕາຽດັບຕາຽວາຽແທ້ໆ, ແຕ່ຜ່ານມາກໍ່ບໍ່ເຕັ້ນເປັນຫຽັງຈັກເທື່ອ, ບໍ່ທັນມີໃຜຖືກຕາຽແນວນັ້ນ. ຄືຊິແມ່ນຄົນເຂົາເຈົ້າບໍ່ທັນຮູ້! ແລ້ວຄວາມຢ້ານກົວກໍ່ຫາຽໄປ, ຂະນັ່ງເປັນຜູ້ໃຈຮ້ອນ, ຢູ່ໃຕ້ດິນໄດ້ສາມມື້ໝາຽວ່າເປັນດັ່ວງໄດ້ 3 ມື້ກໍ່ພ້າວໝົ້ນອອກຈາກປັ້, ປີກປີ່ງອອກ, ຂາປີ່ງອອກກາຽເປັນແມງວັນບິນຂຶ້ນ

ຈາກໜ້າດິນ, ເທື່ອທຳອິດເຫັນຕາເວັນ, ປັດໂທ! ໜ່ວຍໂລກ
ສັ່ງນາງງາມກະດໍ້! ຂະນ້ອຍບໍ່ນຶກບໍ່ຝັນວ່າດຳລົງຊີວິດຢູ່ເທິງໜ້າ
ໂລກດວງຂຽວງາມນີ້ຈະບໍ່ມີມື້ຖືກຈັບຢ່າງອັບອາຍຄືມື້ນີ້...

ເຜິ້ງນາງຫົວ «ຮື!» ບາດໜຶ່ງແລ້ວເວົ້າວ່າ

— ແມ່ນຜູ້ໃດ, ຄັນເຈົ້າຫາກນັ່ງນຶກນອນຝັນຢູ່ກໍ່ບໍ່ມີໃຜ
ຈັບເຈົ້າດອກ. ແຕ່ຕົວຈິງໃນມື້ນີ້ບໍ່ແມ່ນເລື່ອງນຶກຫຼືຝັນລ້າໆ,
ມັນແມ່ນການກະທຳຕົວຈິງ, ເຈົ້າໄປລັກຂອງເຂົາ, ບໍ່ແມ່ນ
ແຕ່ເທື່ອດຽວນີ້, ຕະຫຼອດຊີວິດອັນໂສໂຄກ; ນັ່ງລ້າຢູ່ດາຍແຕ່
ເຈົ້າພັດຢາກກິນແນວແຊບຂອງດີ. ເຈົ້າມີຊີວິດດ້ວຍອາຊີບຂີ້
ລັກ. ດັ່ງນັ້ນອາດເວົ້າໄດ້ວ່າ: ຄັນມີແມງວັນໂຕໜຶ່ງໝົ້ນຂຶ້ນມາ
ກໍ່ໝາຍຄວາມວ່າ «ໜ່ວຍໂລກດວງຂຽວງາມ» ນີ້ພັດມີຂະ
ໂມຍຜູ້ໂສໂຄກຕື່ມໂຕໜຶ່ງແລະຕື່ມສັດຕູຕົວອັນຕະລາຍໃຫ້ແກ່
ມະນຸດອີກຕົວໜຶ່ງ...

ແມງວັນພວມລືມຄວາມຢ້ານໄປໜ້ອຍໜຶ່ງພັດຖືກເຜິ້ງນາງ
«ບຸກ» ໃຫ້ບາດໜຶ່ງອີກປາກປູ້ໄປ, ຢືນນິດອິ່ມຊິ່ມຢູ່, ເຫັນດັ່ງ
ນັ້ນເຜິ້ງນາງພັດຍານສຽງລົງເພື່ອໃຫ້ແມງວັນອຸ່ນອຽນ ສ່ວນ

ໜຶ່ງ, ຖ້າມັນຍ້ານໂພດພັດຈະໃຫ້ການບໍ່ຈະແຈ້ງ. ເຜີ້ງບາງເວົ້າວ່າ

— ຈັ່ງໃດ? ເວົ້າສໍ່ານັ້ນຊິບໍ່ເກີດຄວາມດອກຕິ?

ແມງວັນພ້າວຮັບສາລະພາບວ່າ

ໂດຍ! ໂດຍ! ເວົ້າແນວໃດກໍ່ຄືຖືກຢູ່, ຖືກຢູ່... ແຕ່ວ່າຄັນຊິເວົ້າໃຫ້ສຸດຂຸດໃຫ້ເຖິງແທ້ກະໄລ່ແຕ່ປູ່ສັງກະສາຍ່າສັງກະສີມາພຸ້ນແລ້ວ, ຄວາມຈິງແລ້ວເຊື້ອຊາດພວກຂະນ້ອຍໝົດຫັ້ນແລ້ວ. ບໍ່ແມ່ນແຕ່ຂະນ້ອຍຜູ້ດຽວທີ່ບໍ່ຮູ້ອອກແຮງງານ ແລະຢູ່ກິນເປື້ອນເປີະ. ຄືຊິແມ່ນຍ້ອນແນວນັ້ນແລ້ວໃຜໆກໍ່ຈຶ່ງຄຽດຊັງ, ຫວັງຢາກໃຫ້ພວກຂະນ້ອຍດັບກ້ຽງອີຫຼີ. ຍັງບໍ່ທັນພໍພັດເສກສັນປັ້ນແຕ່ງວ່າພວກຂ້ອຍນີ້ເປັນຜູ້ນໍາເອົາພະຍາດພະເຍົາໄປແຈກຢາຍ. ໂອຍ! ຄັນເພິ່ນຊັງແລ້ວ «ເລື່ອງບໍ່ມີກໍ່ຫາໃສ່, ໄມ້ບໍ່ໃຫຍ່ກໍ່ຫາແຖມ».

ເຜີ້ງບາງຖາມດ້ວຍທ່າທີໝິ່ນປະໝາດ:

— ໃຜທຸລະບັງບຽດຊາດມຶງ?

— ບໍ່! ຂະນ້ອຍບໍ່ໄດ້ເວົ້າວ່າ ແມ່ນເຊື້ອຊາດເຜີ້ງພວກຍາ

ນາງນີ້ດອກ, ນັ້ນແມ່ນພວກຄົນຫັ້ນມັກເວົ້າ... ແມງວັນເວົ້າຍັງບໍ່ທັນສຸດ, ເຜີ້ງນາງໄດ້ຕັດຄວາມມັນດ້ວຍຄວາມອະທິບາຍອັນເຄັ່ງຂຶມ:

— ຢ່າມາເລົ່າທຸກ! ບໍ່ມີຈັກເທື່ອດອກສັດຊັ້ນສູງຄືຄົນນີ້ນັ້ນຊິໄປບັງບຽດເຫິງສາສັດນ້ອຍໆ ຄືຊາດມຶງ.

— ບໍ່! ກໍ່ບໍ່ແມ່ນພິດຊູ່ຄົນແທ້ດອກ. ໂພດແທ້ໆກໍ່ມີແຕ່ພວກແພດນຸ່ງເສື້ອຂາວຕາບຍາບນັ້ນດອກມັກເວົ້າ, ບໍ່ພຽງແຕ່ເວົ້າຊື່ໆ. ໄປຮອດໃສແມ່ນບຸກລຸກລະດົມປະຊາຊົນເຮັດອານາໄມ, ຂ້າຍຸງ, ຂ້າແມງວັນກັນພະຍາດ. ກອງຂຶ້ນຂວາງບຸກລຸກປະຊາຊົນ ຮອດໃສແມ່ນບ້ານນັ້ນ ກ້ຽງເອີດເຕີດໄປ, ແມງວັນພວກຂະນ້ອຍ ຈົນຊິບໍ່ມີບ່ອນຈັບ, ເອີ! ຄືຍຸງຫັ້ນຂອງເປັນຕາຂ້າ. ຈັບໃຜແມ່ນແຍ່ງວາງແຫງຈົນໜັງຊອດທັງຈັບທັງດູດເອົາເລືອດອີກ. ບໍ່ພໍຍັງສົ່ງພະຍາດໄຂ້ຍຸງຕື່ມອີກ, ຕາມແພດເຂົາວ່າຊັ້ນໃດ. ສ່ວນແມງວັນພວກຂະນ້ອຍຕອມລ້າໆ, ບໍ່ຫອນຂົບກັດຫຽ້ງກິນຂອງກິນແຕ່ເລັກນ້ອຍບໍ່ພໍຮອດໃສດອກ. ສ່ວນພວກແພດວ່າພວກຂະນ້ອຍສົ່ງແມ່ພະຍາດ. ນັ້ນມັນບໍ່

ແມ່ນຄວາມຈິງດອກ. ບໍ່ເຊື່ອມາເບິ່ງແມ, ນຳຕີນໂຕຂະນັງນີ້ ບໍ່ເຫັນແມ່ພະຍາດຈັກໂຕດອກ.

ມັນນິດຄາວໜຶ່ງຄືຢາກທວນຄວາມຈຳແລ້ວເວົ້າຕໍ່:

— ມີຫວ່າງໜຶ່ງ ໃຫບ້ານຫຼາຽຄົນເຈັບທ້ອງ, ທ້ອງຊຸທ້ອງ ຮາກ, ໃຫເຮືອນມີຄົນເຈັບເລີຽເຊີນໝໍເຢົາໄປເຮັດຜີ, ມື້ນັ້ນ ແມງວັນກໍ່ໄປນຳເຖົ້າໝໍຢາເຢົາ, ຂຶ້ນຮອດເຮືອນແມງວັນກໍ່ ເຂົ້າໄປສ້ວມຄົນເຈັບພຸ້ນໂລດ, ມັນບິນໄປ «ກວດກາ» ໝົດສູ່ ອັນ, ຕັ້ງແຕ່ກະບອງສູ້ຮາກເຖິງບັ້ງຖ່າຽຂອງຄົນເຈັບ, ແລ້ວ ບິນອອກມາເບິ່ງເຖົ້າໝໍເຢົາຈົ່ມມົນຢູ່. ມັນເຫັນໝູຕົ້ມ, ໄກ່ຕົ້ມ ເຫຼືອງອ່ງຮ່ງ, ພວກແມງວັນທີ່ພວມຊຸມກັນຢູ່ໃນພາໝູຕົ້ມ ຕ່າງກໍ່ເຊີນມັນຢ່າວໆ, ມັນເຈີດລົງກິນ «ສາມັກຄີ» ນຳເຂົາ ທັນທີ. ຈົ່ມມົນເມື່ອຽເຖົ້າໝໍເຢົາກໍ່ຈົກຂາໄກ່ມາແກ້ມເຫຼົ້າ, ມື້ ນັ້ນເຖົ້າໝໍເຢົາກິນເຕັມອີ່ມ, ພວກເຮົາກໍ່ສົມຄວນ, ແຕ່ມື້ ລຸນມາຄົນເຈັບນັ້ນພັດຕາຽ, ຈຶ່ງແມ່ນເວນ, ມື້ລຸນມາເຖົ້າໝໍ ເຢົາພັດເຈັບທ້ອງ, ໄປຖ່າຽແດ່ຮາກແດ່, ຄັນພວກບາງແພດ ມາບໍ່ທັນ. ກະຄືວ່າຫັ້ນແລ້ວ! ບາງແພດສັກຢາໃຫ້, ເອົາຢາ

ໃຫ້ພໍ່ເຖົ້າກິນ, ພໍເຖົ້າເລີ້ຽງຫວາງ, ນາງແພດເພິ່ນເວົ້າວ່າບໍ່ມີຜີມີສາງຫຽ້ງມາເຮັດໃຫ້ພວກເຮົາລົ້ມຕາຽດອກ. ຄັນມີຜີເປັນຫຽ້ງຜີຊິ່ຫາບເຮັດໃຫ້ພໍ່ເຖົ້າໝໍເຢົາເອງ, ອີກຢ່າງໜຶ່ງຄັນມີຜີແທ້ເປັນຫຽ້ງຂ້າໝູຂ້າໄກ່ໃຫ້ຜີກິນໝົດຕັ້ງເທົ່າໃດແລ້ວແຕ່ຄົນກໍ່ຍັງຕາຽຢູ່? ຕາມວິທະຍາສາດເວົ້າວ່າ:ຄົນເຮົາເຈັບເປັນນັ້ນແມ່ນຍ້ອນແມ່ພະຍາດ, ນາງແພດຍັງເວົ້າອີກວ່າ, ແມ່ພະຍາດມີຢູ່ທຸກບ່ອນ, ແມ່ພະຍາດຢູ່ໃນຂອງກິນທີ່ເຮັດບໍ່ສະອາດ, ຢູ່ນໍ້ານໍ້າ, ຕິດນຳມືເຮົາເອງຕ່າງໆ. ແມ່ພະຍາດເຂົ້າໃນຮ່າງກາຽຂອງຄົນເຮົາສ່ວນຫຼາຽແມ່ນຜ່ານການກິນຢູ່.

ປາກແມ່ນປະຕູໂຂງ ຂອງບັນດາທາດວິຕາມິນ ທີ່ເຂົ້າໄປບຳລຸງຮ່າງກາຽ, ແຕ່ມັນກໍ່ເປັນປະຕູໂຂງຂອງແມ່ພະຍາດທຸກຊະນິດ. ຄັນຖ້າເຮົາຫາກກິນອາຫານບໍ່ສະອາດ, ຫຼືວ່າກ່ອນຈະກິນເຂົ້າບໍ່ລ້າງມື, ມີເປື້ອນຈັບຂອງກິນໃສ່ປາກ ແມ່ພະຍາດກໍ່ເຂົ້າໄປໃນຮ່າງກາຽ, ຫຼືຖ້ວຽບ່ວງບໍ່ສະອາດຕ່າງໆ... ນາງແພດເວົ້າຫຼາຽ ເລື່ອງມ່ວນທີ່ສຸດ. ຈັກເວົ້າໄປເວົ້າມາແນວໃດພັດມາເວົ້າວ່າ ຕົວການນຳເອົາແມ່ພະຍາດ ໄປຂະ

ຫຽາງນັ້ນມີຫຼາຽແນວ, ແຕ່ສຳຄັນນັ້ນແມ່ນແມງວັນ, ມັນບິນແຕ່ເຮືອນນີ້ໄປຫາເຮືອນນັ້ນ, ບິນແຕ່ບ້ານນີ້ໄປບ້ານອື່ນ, ໄປໃສມັນກໍ່ເອົາພະຍາດໄປນຳ, ມັນໄປຕອມຖ້ວຽແກງ, ຕອມຖ້ວຽນ້ຳຫວານ, ມັນລ້າງຕີນ ທີ່ມີແມ່ພະຍາດໃສ່ຖ້ວຽຂອງກິນ, ເມື່ອເຮົາກິນລົງໄປ, ເຮົາຄິດວ່າຕີນກິນເຄື່ອງແຊບຂອງນົວ, ໂດຽບໍ່ນຶກວ່າຕີນກິນແມ່ພະຍາດ ລົງທ້ອງພ້ອມ. ຄັນຄິດຄັກໆ ເຮົາຈະຮູ້ໄດ້ວ່າ: ແມງວັນໂຕໜຶ່ງຄືກັນກັບເຮືອບິນອາເມລິກາຄັນໜຶ່ງນັ້ນແຫຼະ, ເຮືອບິນອາເມລິກາໄປຮອດໃສກໍ່ຖິ້ມໝາກແຕກ, ໝາກບົມຫວ່ານຢາພິດ, ຢາເບື່ອທຳລາຽຊີວິດຂອງປະຊາຊົນເຮົາ, ເລື່ອງນັ້ນພວກເຮົາເຫັນກັບຕາ, ແຕ່ແມງວັນໂຕໜຶ່ງກະຊິຕ່າງຫຼັງ ກັບເຮືອບິນບັນທຸກໝາກແຕກ, ຢາເບື່ອ, ແມງວັນບັນທຸກແມ່ພະຍາດຈັກວ່າແມ່ນແມ່ພະຍາດເຈັບທ້ອງ, ເຈັບຕາ, ປອດແຫ້ງ, ທ້ອງບິດ, ມີພະຍາດທຸກຊະນິດ, ບັນດາພະຍາດເຫຼົ່ານັ້ນໄດ້ກໍ່ຄວາມລົ້ມຕາຽເສຽຫາຽ, ເຖິງຊີວິດ ແລະ ວຽກງານ, ກໍ່ຄວາມຊຸກເຂັນເຈັບປວດບໍ່ຈັກວ່າເທົ່າໃດ! ຍ້ອນວ່າແມ່ພະຍາດມັນນັ້ງໂພດ, ຕາ

ຄົນເຮົາບໍ່ອາດແນມເຫັນ, ສະນັ້ນໂທດກຳຂອງແມງວັນກໍ່ຍັງບໍ່ທັນຖືກເຜີຍແບ່ຢ່າງກ້ວາງຂວາງ. ຜ່ານຕົວຈິງນັ້ນອາດຈະສະຫຼຸບໄດ້ວ່າ: ແມງວັນໂຕໜຶ່ງທໍ່ກັບກັບບັກອາເມລິກາຂັບຍົນໂຕໜຶ່ງ.

ເວົ້າຮອດນີ້ແມງວັນຢຸດ, ມັນຄິດຄາວໜຶ່ງແລ້ວເວົ້າຕໍ່ບາດຊ້າໆ ຢ່າງບໍ່ພໍໃຈ:

— «ແມງວັນໂຕໜຶ່ງທໍ່ກັບອາເມລິກາຂັບຍົນຜູ້ໜຶ່ງ» ເວົ້າຈັ່ງຊັ້ນກໍ່ຍັງເວົ້າ, ໃຜຊິບໍ່ຄຽດ, ພວກເພື່ອນກໍ່ຮູ້ແລ້ວແມ່ນບໍ່? ຢູ່ໃນດິນລາວເຮົານີ້ແມ່ນໃຜຈະບໍ່ຄຽດຊັງແລະຄຽດແຄ້ນຈັກກະພັດອາເມລິກາຜູ້ຮຸກຮານ. ຖ້າວ່າປຽບໃສ່ໝາຂະນັ້ນກໍ່ຍັງດີໃຈກ່ວາ.

ມີຫຼາຍຄວາມເຫັນສົນທະນາກັນວົນໆ ຂຶ້ນ, ມີຈຸພັດເຫັນດີຕາມຄວາມຂອງແມງວັນທີ່ມັນໄດ້ເວົ້າວ່າ «ປຽບໃສ່ໝາຍັງດີກ່ວາປຽບໃສ່ຍົນອາເມລິກາ». ມີເຜິ້ງໂຕໜຶ່ງເຫັນດີຕາມຄວາມຂອງບາງແພດທີ່ວ່າ «ແມງວັນໂຕໜຶ່ງເທົ່າກັບອາເມລິກາຂັບຍົນຜູ້ໜຶ່ງ», ເຜິ້ງຕົວນັ້ນຍັງອະທິບາຍຢ່າງຈະແຈ້ງອີກວ່າ:

— ໝາມັນກໍ່ກິນເປືອນຢູ່ ແຕ່ມັນແມ່ນສັດທີ່ມີຜົນ, ບໍ່ມີຫຍັງເສຽຫາຽໃຫ້ແກ່ຄົນ, ບໍ່ຄວນປຽບໃສ່ໝາ ແມງວັນປະຕິເສດບໍ່ໄດ້ດອກ, ຄິດເບິ່ງແຕ່ພວກເຮົາ ໄປຕອມດອກໄມ້, ເບິ່ງເກສອນດອກໄມ້ຕິດໝົ່ນໝົດຕີນຕົວ, ຊິ່ເວົ້າຫຍັງແມງວັນມັນຕອມທົ່ວທີບ, ຕອມປາກບາດ, ຕອມອາຈົມ, ບໍ່ຈັກວ່ານ້ຳໜອງແມ່ພະຍາດ, ບໍ່ຈັກວ່າອາຈົມຕິດນຳຕີນ, ຕິດຕີນໂຕມັນ, ບາດແລ້ວໄປຕອມຂອງກິນ, ຮື! ເປັນຕາຂີ້ດຽດ? ສົມພໍ່ເຖົ້າໝໍເຢົາເຈັບທ້ອງເກືອບຕາຽ, ຍ້ອນໄປກິນຊີ້ນໄກ່ທີ່ແມງວັນຕອມ.

ການຖົກຖຽງກັນໄດ້ແກ່ຍາວໃນໄລຍະໜຶ່ງ, ສຸດທ້າຽສ່ວນຫຼວງຫຼາຽ ກໍ່ເຫັນດີເປັນເອກະພາບວ່າ: « ປຽບແມງວັນໃສ່ອາເມລິກາຊັບຍົນແມ່ນເໝາະສົມ ».

ການ«ໄຕ່ສວນ»ແມງວັນກໍ່ໄດ້ສືບຕໍ່, ເຜິ້ງນາງຖາມເຖິງຄຸນງາມຄວາມດີຂອງແມງວັນໃນໄລຍະທີ່ຜ່ານມາມີຫຍັງແດ່?

ແມງວັນມິດຢູ່, ມັນບໍ່ຮູ້ຕອບເພາະວ່າມັນບໍ່ເຂົ້າໃຈແລະກໍ່ບໍ່ທັນໄດ້ຍິນຈັກເທື່ອສັບອັນວ່າ «ຄຸນງາມຄວາມດີ» ເພາະ

ມັນກໍ່ບໍ່ເຄີຍມີຄຸນງາມຄວາມດີຫຽັງ! ແລ້ວເຜີ້ງບາງພັດຖາມເຖິງຈຸດບົກພ່ອງ, ນີ້ມັນກໍ່ເວົ້າວ່າບໍ່ເຂົ້າໃຈອີກ. ສຸດທ້າຍແມ່ນຖາມເຖິງຈຸດປະສົງມັນມາຮັງເຜີ້ງ, ໝົດຄຳຖາມນີ້ຮອດຄຳຖາມໃໝ່, ແມງວັນບໍ່ເຄີຍເວົ້າຫຼາຍຄືມື້ນີ້ຈັກເທື່ອ, ແຕ່ມັນຄິດວ່າຖ້າເຮົາເຮັດແຂງເຂີງເຈົ້າຈະບໍ່ປ່ຍ, ມັນເລີຍຕົກລົງຮັບຄວາມຜິດທັງໝົດດ້ວຍຄຳເວົ້າແລະ ທ່າທີປະນີປະນອມ, ມັນຄິດວ່າບາດປ່ຍອອກແລ້ວພວກເຜີ້ງນີ້ມັນບໍ່ໄດ້ຮູ້ຈູດອກ, ຮູ້ກໍ່ບໍ່ຈື່ໝາຊ້ຳດອກ, ເພາະແມງວັນໂຕໃດກໍ່ຄືໂຕນັ້ນ.

ໝູ່ເຜີ້ງຈຳນວນໜຶ່ງຕີລາຄາວ່າ ແມງວັນດື້ດ້ານ ບໍ່ຍອມຮັບຄວາມຜິດໂດຍຕີວ່າບໍ່ຮູ້, ຈຳນວນໜຶ່ງພັດເວົ້າວ່າມັນອາດບໍ່ຮູ້ແທ້, ເພາະພວກແມງວັນບໍ່ມີການຈັດຕັ້ງຄືໝູ່ເຜີ້ງພວກເຮົາ, ແມງວັນມັນເສລີວິຫິວບໍ່ຮູ້ຫຽັງເລື່ອງດີກັບບໍ່ດີ, ກໍ່ຄືມັນເວົ້າຫັ້ນແລ້ວ. ມັນຮູ້ແຕ່ເລື່ອງຫິວກັບກິນ, ທັງຫຼາຍເຂົາຮູ້ກິນແລະຮູ້ອີ່ມ, ແຕ່ແມງວັນອີ່ມກໍ່ຍັງບໍ່ຮູ້ອີ່ມຊ້ຳ, ກິນໝົດເຊັ່ນໝົດຊາດສຽງສົນທະນາຕ່າງ ໆ ງຽບລົງເມື່ອເຜີ້ງບາງເລີ່ມເວົ້າ:

– ຜ່ານການເລົ່າຂອງແມງວັນ, ພວກເຮົາຈະແຈ້ງສົມຄວນກ່ຽວກັບຊີວິດ ຂອງມັນ ທີ່ຜ່ານມາ. ເຖິງຈະປະຕິເສດປານໃດພວກເຮົາ ກໍ່ເຫັນບ່ອນວ່າ ແມງວັນເປັນສັດອັນຕະລາຽຄືບາງແພດ ໄດ້ຕີລາຄານັ້ນ. ພວກເຮົາເປັນສັດທີ່ມີຜົນໃຫ້ແກ່ຄົນ, ນ້ຳເຜິ້ງທີ່ພວກເຮົາຜະລິດອອກເປັນຢາປົວພະຍາດຫຼາຽຢ່າງ, ກິນນ້ຳເຜິ້ງພາໃຫ້ອາຍຸຍືນຕື່ມ ແຕ່ແມງວັນພັດເປັນຜູ້ເອົາແມ່ພະຍາດໄປທຳລາຽຊີວິດຂອງຄົນ. ມັນເປັນຝ່າຽປໍລະປັກ, ນັ້ນກໍ່ແມ່ນສັດຕູຂອງພວກເຮົາ, ແມ່ນຊັ້ນບໍ່?

ພວກເຜິ້ງພີປີກເຫັນດີຢ່າວໆ! ເຂົາເຈົ້າຕົກລົງນຳກັນວ່າໂທດຂອງມັນສົມຄວນປະຫານຊີວິດ, ແຕ່ກໍ່ຍັງຖ້າຟັງຄຳເຫັນຂອງເຜິ້ງນາງ. ສ່ວນແມງວັນໜ້າຫຼ່າຕາຕາຽໄປ. ເຜິ້ງນາງເວົ້າຕໍ່ວ່າ

– ແຕ່ຕາມຟັງແລ້ວ ກໍ່ເຫັນວ່າ ມັນຮັບສາລະພາບ, ພວກເຮົາຕິດຕາມເບິ່ງການຫັນປ່ຽນຂອງມັນ ໃນໄລຍະຕໍ່ໄປ, ຖ້າມັນຍັງສືບຕໍ່ສ້າງໂທດກຳ ແລ້ວດ້ວຽກຳລັງຫຼວງຫຼາຽຂອງພວກເຮົາ, ມັນຈະຖືກລົງໂທດຢ່າງເໝາະສົມ. ຕາມເຮົາຄິດ

ວ່າ, ຄັນມັນຍັງເຮັດຄືເກົ່ານີ້ ບໍ່ດົນດອກມັນຈະຖືກຄົນນັ້ນ ຂອງເປັນຜູ້ລົງໂທດມັນ.

ແມງວັນຍິ່ງຟັງໄປກໍ່ຍິ່ງດີໃຈ, ມັນຮັບທຸກເງື່ອນໄຂທີ່ຜູງເຜີ້ງວາງອອກຢ່າງບໍ່ຮ້ອງຂໍຕື່ມພໍຄວາມ, ມັນຄອບອົກຄອບໃຈກັບເຜີ້ງນາງ ແລະ ປະຕິຍານຕົວຢ່າງຄັກແນ່ແລ້ວສັ່ງລາຝູງເຜີ້ງບິນກັບບ້ານ.

ແມງວັນຄິດ: ຈິ່ງແມ່ນບຸນ! ນີ້ຈິ່ງແມ່ນສົມກັບຄວາມວ່າ "ລອດຕາຍ" ແຕ່ໃນທັນໃດນັ້ນມັນພັດຮູ້ສຶກຫິວ, ມັນບໍ່ທັນໄດ້ກິນຫຍັງເທື່ອ ແຕ່ເຊົ້າພຸ້ນມາ, ແມງວັນບໍ່ເຄີຍຫິວແຮງປານນີ້ຈັກເທື່ອ. ເສັ້ນທາງແຕ່ຮັງເຜີ້ງເມືອບ້ານຈະຕ້ອງບິນຜ່ານກອງຂີ້ຄວາຍ, ບິນຜ່ານຂຸມຖອກຂີ້ເຫຍື້ອ, ຂຸມຖ່າຍຊຶ່ງເປັນບ່ອນມັນເຄີຍຊອກກິນໃນຄາວກ່ອນ ຄວາມຫິວຊວນໃຫ້ມັນລົງຕັ້ງຫຼາຍເທື່ອ ແຕ່ມັນພັດຢ້ານວ່າແມ່ເຜີ້ງ ຈະມາຈອບເວລາມັນພວມກິນ, ສຸດທ້າຍມັນຖາມຕົນເອງວ່າ: ຊັ້ນຊິໄປຫາກິນຢູ່ໃສ? ກິນຫຍັງຈິ່ງຖືວ່າສະອາດ? ຄິດໄປຄິດມາດົນເຕີບມັນ "ເອີ" ຂຶ້ນພິດແຮງເມື່ອຄິດເຫັນຄຳທ່ອງຂຶ້ນໃຈ

ຂອງນັກຮຽນຫ້ອງສອງທີ່ວ່າ

ງານຄືສວນດອກໄມ້.

ອານາໄມຄືໂຮງພະຍາບານ.

ມີລະບຽບຄືກອງທະຫານ...

ພໍຄິດແລ້ວມັນກໍ່ພືປີກໄປຢ່າງຮີບດ່ວນ, ມັນບິນໄປທາງໂຮງໝໍທະຫານ, ບ່ອນມັນເຊື່ອວ່າສະອາດກ່ວາທຸກໆ ບ່ອນ.

ໃນເວລານີ້, ຖ້າຢາກຫາແມງວັນກໍ່ຊິຍາກ, ບຶດເຂົາເຫັນມັນໝົ້ນຊີງກັນ ຢູ່ຂຸມຖອກບັງພັນ ແຜທີ່ເຕັມດ້ວຍເລືອດແລະ ນ້ຳໜອງ, ບຶດພັດເຫັນຢູ່ກອງຂີ້ເຫຍື້ອທີ່ເນົ່າເໝັນບຶດພັດລັກຊີມຊີ້ນຂົ້ວຂອງພວກເອື້ອຍລ້ຽງ, ບຶດພັດໄປກວດກ້ຽງຖົ່ມນ້ຳລາຍຂອງຄົນເຈັບປອດແຫ້ງ, ແລ້ວບິນໄປຊີມຈອກນ້ຳນົມທຳອິດ ມັນຈຸ່ມງວງກັບ 2 ຂາໜ້າລົງນ້ຳນົມ, ເຫັນວ່າແຊບ, ພວມຄືກຍານຫີວມັນອອກແຮງກິນຢ່າງເມົາມົວ.

ພໍດີມີຄົນມາໄລ່, ແມງວັນຕື່ນໝົດແຮງ, ຟ້າວຟັ່ງບິນອອກແຕ່ຍ້ອນຟ້າວໂພດ ພັດໄປຕຳໃສ່ຂ້າງຈອກເລີຍ ຕົກລົງຟູເອັ່ງເລັ່ງເຫິງໜ້ານ້ຳນົມ, ປີກມັນຄືກປຽກບິນຂຶ້ນບໍ່ໄດ້, ບາງຄົນ

ເຈັບເລີຍເອົາບົ້ວມີເຂ່ຽມັນອອກ, ແລ້ວຍໍຈອກນ້ຳນົມມາໃຫ້ລູກຊາຍນັ່ງໃນຕັກກິນ; ທ້າວແອບອອນແອກແລກຢູ່ໃນຈ່ອງຜອມຫຼາເຫຼືອງ, ນິນຕາຂຶ້ນເຫັນນ້ຳນົມກໍ່ເສີຍຢູ່, ພົ້ນທິວເຂົ້າເອິກແມ່ເພື່ອສະແດງຄວາມບໍ່ຢາກ, ແມ່ທ້າວແອເລີຍຍົວະລູກເຮັດຄືມັນຮູ້ຄວາມ:

— ນ້ຳນົມເຢັນແລ້ວລູກ, ກິນສາ, ອົດກິນໃຫ້ມີແຮງ... ນາງແພດພວມສີດຢາ ໃຫ້ອ້າຍທະຫານ ນອນຢູ່ຕຽງ ທາງຂ້າງໄດ້ຍິນແນວນັ້ນຟ້າວເວົ້າ:

ຢ່າເອື້ອຍ! ແມງວັນຕົກໃສ່ແລ້ວ ບໍ່ໃຫ້ຫຼານນ້ອງກິນອີກແຫຼະ, ນ້ອງຈະແຕ່ງໃໝ່ໃຫ້ຫຼານກິນ, ເທື່ອໜ້າຄວນເອົາຝາອັດໄວ້ດີໆ ແມງວັນຕົກໃສ່ເປັນພິນອັນຕະລາຍແທ້ໃດ! ເພື່ອໃຫ້ທຸກຄົນໄດ້ເຫັນແມ່ພະຍາດ, ນາງແພດໄປເອົາກ້ອງຈຸລະທັດມາໃຫ້ພວກເອື້ອຍນ້ອງຄົນເຈັບໄດ້ເບິ່ງແມ່ພະຍາດ.

ເມື່ອເຫັນແນວນັ້ນແມງວັນຄືໃຈມັນຈົ່ມພຶມພໍາ: «ເວົ້າຄືເພິ່ນມີຕາທິບ, ຄົນທັງຫຼາຍບໍ່ເຫັນ, ເພິ່ນພັດເຫັນແຕ່ຜູ້ດຽວ, ໃຜຊິເຊື່ອ!» ເມື່ອເບິ່ງໄປເບິ່ງມາແມງວັນຈຶ່ງຈື່ວ່າມັນ

ໄດ້ກິນກ້ວຽບຳທ້າວແອເທື່ອໜຶ່ງແລ້ວ, ບໍ່ທັນເຫິງນານຫຼັງ ຕອນເຊົ້າວານນີ້ໜຶ່ງໝູ່ແມງວັນຕັ້ງເປັນຫຼາຽໂຕຍຸ່ມເຂົ້າຍາດ ກິນກ້ວຽບຳທ້າວແອ, ແອນ້ອຍກໍ່ຍັງຫຼັບເສີຽຢູ່. ຈົນມັນຍໍກ້ວຽ ໃສ່ປາກພວກແມງວັນຈຶ່ງຕື່ນ, ແລ້ວພາກັນບິນອອກ, ແມງ ວັນຄິດໃນໃຈ: ເຊົ້າວານນີ້, ຄືມັນຍັງຕຸ້ຽເອົາແທ້ເອົາວ່າ, ແກ້ມໂຕ້ນແດງສາ! ຄືຊິແມ່ນເຈັບທ້ອງຖອກ ເບິ່ງຊີງຈີ່ງຈ່ອຍ ລົງໄວປານນັ້ນ.

ຄາວໜຶ່ງນາງແພດອູ້ມກ້ອງຈຸລະທັດອອກມາ, ເອົານ້ຳ ນົມຢາດໜຶ່ງຢອດໃສ່ໜ້າແກ້ວແຜ່ນນ້ອຍໆ ຂອງກ້ອງສ່ອງບິດ ໜຶ່ງນາງແພດບອກ ໃຫ້ແມ່ທ້າວແອມາເບິ່ງ ທັງບອກແມ່ທ້າວ ແອວ່າ

— ຫຼຽບຕາເບື້ອງໜຶ່ງເອື້ອຽ!... ເຫັນບໍ? ຕົງຍຸບໆຢູ່ຫັ້ນ ແມ່ນແຕ່ແມ່ພະຍາດພິດແຫຼະ, ນັບເບິ່ງດູ, ຮອດຮ້ອຍໂຕບໍ່?

ແມ່ທ້າວແອທັງເບິ່ງທັງສັ່ນຄີງ:

— ຕາຽ! ຕາຽ! ບໍ່ເຄີຽຮູ້ບໍ່ເຄີຽເຫັນ, ມັນບໍ່ລື່ນຮ້ອຍໂຕພຸ້ນ ບໍ່ສາວ? ເກືອບທ້າວແອກິນພະຍາດເຂົ້າຕື່ມ, ລູກຂ້ອຍຖອກ

ທ້ອງແຕ່ວານນີ້ຍັງບໍ່ເຊົາ. ໄດ້ຍິນແມ່ທ້າວແອເວົ້າແນວນັ້ນ ອ້າຍນ້ອງຄົນເຈັບພາກັນຫຸ້ມມາເບິ່ງ, ມີຄົນເຈັບຜູ້ໜຶ່ງເບິ່ງ ແລ້ວເວົ້າ.

– ບັດໂທ! ເຫັນມັນຂິບບໍ່ເຈັບຄືຍຸງຢ່າໄປວ່າມັນດີ, ມາ ເຫັນຈັ່ງຊີ້ຈິ່ງຮູ້, ມັນດຶກໃນເລິກແລບທີ່ສຸດ, ຄິດເບິ່ງນ້ຳບົມ ຍາດໜຶ່ງມີແມ່ພະຍາດຮ້ອຍປາຍໂຕ, ຄົນໝົດຈອກນັ້ນຊິ່ມີເທົ່າ ໃດ?

– ມີຄົນເຈັບຜູ້ໜຶ່ງ ເບິ່ງເຫັນໂພດຖືກໝູ່ດຶງອອກ. ປານ ນັ້ນຍັງບໍ່ຍາກອອກ, ເບິ່ງລາວຊົງຄິດເຄືອງແລ້ວຖາມນາງ ແພດ

– ພະຍາດຫຍັງບໍນາງແພດເບິ່ງຍາກຄືຂອດໄວ້?

– ແມ່ພະຍາດທ້ອງຂີ້ຮາກ, ໂຕມີຂົນແມ່ນແມ່ພະຍາດ ທໍລະພິດ.

ໂອ! ໃນເມື່ອເຂົາເຈົ້າພວມຍາດກັນເບິ່ງຢູ່ນັ້ນຄົນເຈັບຜູ້ ໜຶ່ງຍັງຖາມຕໍ່ຢູ່ວ່າ

– ນີ້ນາງແພດ! ອ້າຍສົນໃຈແນວນີ້ : ແມ່ພະຍາດເຫຼົ່ານີ້

ມັນເຮັດແນວໃດຢູ່ນໍ? ແຂວນໂຕ້ນເຕັ້ນຢູ່ຕາມໂຕມັນບໍ່ ຫຼືຢູ່ໃນທ້ອງແມງວັນນັ້ນບໍ່ ຫຼື ວ່າພົ້ນຢູ່ຄືພັດຄືເມັນນີ້?

ບໍ່ຖ້າໃຫ້ນາງແພດຕອບ, ມີຄົນເຈັບຜູ້ໜຶ່ງຕອບກ່ອນວ່າ

— ໃຜຊິແຂວນຢູ່ໂຕ້ນເຕັ້ນ ຄືພາກບິນ ແຂວນຕາມຍົນອາເມລິການີ້, ມັນກໍ່ພົ້ນຢູ່, ຕິດຢູ່ຕາມໂຕຕາມຂາມັນຫັ້ນ, ຕາມເຮົາວ່າ; ໂຕແມງວັນມີຂົນບັ່ງໆໃດ, ມັນຊິຕິດຫຼັງຕາມຂົນ, ພົ້ນຄືພັດຄືເມັນນີ້ແລ້ວເຮົາວ່ານໍ!

ຜູ້ໜຶ່ງພັດຖາມຂຶ້ນອີກ:

— ນີ້ນາງແພດ! ຄັນແມ່ພະຍາດຫຼາຍປານນັ້ນ ໃນເມື່ອເຮົາກິນຂອງກິນທີ່ແມງວັນຕອມ ເປັນຫຍັງບໍ່ເຫັນວ່າຊິເຈັບຫຍັງ? ມີເທື່ອແມງວັນຕົກລົງຢູ່ຖ້ວຍແກງ, ເອົາອອກແລ້ວກໍ່ກິນກະບໍ່ເຫັນວ່າຊິເຈັບ ຊິປ່ວຍຂຶ້ນທັນທີໂລດ ໃຫ້ສົມກັບວ່າແມ່ພະຍາດຫຼາຍປານນັ້ນ, ຈັ້ນແມ່ພະຍາດມັນໄປຢູ່ໃສ?ຫຼືວ່າມີໂຕມີແມ່ພະຍາດ, ມີໂຕບໍ່ມີບໍ່?ຫຼືວ່າເວລາເຮົາກິນແມ່ພະຍາດຖືກຫຼົ້າຕາຍໝົດບໍ່?

— ເພື່ອຕອບຄຳຖາມທີ່ວ່າ: ຄັນວ່າແມ່ພະຍາດຫຼາຍປານ

ນັ້ນເປັນຫຍັງ ໃນເມື່ອແມ່ພະຍາດເຂົ້າໃນຮ່າງກາຍເຮົາແລ້ວ ເຮົາຈຶ່ງບໍ່ເຈັບໂລດ? ແມ່ພະຍາດນັ້ນໄປຢູ່ໃສ?

ນາງແພດຕອບວ່າ, ເມື່ອແມ່ພະຍາດເຂົ້າໃນຮ່າງກາຍຄົນເຮົາແລ້ວ, ຍ້ອນສຸຂະພາບເຮົາແຂງແຮງອີກຢ່າງໜຶ່ງຢູ່ໃນຮ່າງກາຍເຮົາກໍ່ມີ «ທະຫານ» ນັ້ນແມ່ນເລືອດຂາວຕ້ານມັນ ຄືນສະນັ້ນມັນຈຶ່ງເຮັດໃຫ້ຄົນເຮົາເຈັບທັນທີໂລດບໍ່ໄດ້.

— ເມື່ອເວົ້າຮອດນີ້ມີຫຼາຍສຽງບັນຂຶ້ນ, ມີຄົນເຈັບຜູ້ໜຶ່ງສົນໃຈ:

— ເລືອດຂາວ! ບໍ່ທັນຍິນຈັກເທື່ອ, ມັນສີຂາວຄືດອກຝ້າຍນີ້ຫວະນາງແພດ? ເລືອດຂາວມັນຢູ່ບ່ອນໃດນໍ! ຄືບໍ່ເຫັນຈັກເທື່ອ.

ນາງແພດເວົ້າຕໍ່ໄປວ່າ

— ບັນຫານີ້ຖ້າເວົ້າໄປເລິກມັນກໍ່ຫຼາຍ. ນ້ອງຈະເວົ້າສະເພາະບັນຫານີ້ສາກ່ອນ, ຫຼາຍເທື່ອຈຶ່ງລົມກັນໃໝ່, ເປັນຫຍັງນ້ອງຈຶ່ງເວົ້າວ່າເລືອດຂາວເປັນທະຫານປ້ອງກັນ? ເພາະວ່າໃນຮ່າງກາຍເຮົາມີເລືອດ 2 ຊະນິດ, ເລືອດຂາວແລະເລືອດ

ແດງ, ເລືອດແດງຈຸດໜັກແມ່ນບຳເອົາທາດບຳລຸງໄປລ້ຽງ
ຮ່າງກາຍ, ເຂົາປຽບເລືອດແດງຄືກັບກັບລົດບັນທຸກວັດຖຸ,
ຄັນບໍ່ມີລົດ ກໍ່ຈະພົບການຫຍຸ້ງຍາກ ໃນການລຳລຽງຂົນສິ່ງ
ຕ່າງ ໆ, ຮ່າງກາຍເຮົາຄືກັນ, ຄັນບໍ່ມີເລືອດແດງກໍ່ບໍ່ມີຫຽັງ
« ບັນທຸກ » ທາດບຳລຸງໄປລ້ຽງຮ່າງກາຍ, ສ່ວນເລືອດຂາວ
ເປັນ « ທະຫານປ້ອງກັນ » ຮ່າງກາຍ, ເລືອດຂາວຕ້ານທານ
ສູ້ຍັນກັບແມ່ພະຍາດທຸກຊະນິດ ທີ່ເຂົ້າມາທຳລາຍຮ່າງກາຍ,
ໃນການສູ້ຍັນນັ້ນ, ຖ້າເລືອດຂາວຊະນະແມ່ນເຮົາຈະບໍ່ເຈັບ;
ຖ້າເຮົາເຈັບໝາຍຄວາມວ່າແມ່ພະຍາດແຮງກ່ວາ. ສົມມຸດຄື
ເມື່ອເຮົາຖືກເປັນບາດຢູ່ຕີນຈະເຫັນເປັນກະດັນຢູ່ກົກຂານັ້ນ
ແມ່ນເລືອດຂາວມາເຕົ້າໂຮມເພື່ອຈະຕ້ານ ກັບແມ່ພະຍາດທີ່
ເຂົ້າມາຕາມປາກບາດ, ບໍ່ໃຫ້ແມ່ພະຍາດລ່ວງເລິກເຂົ້າໃນ
ຮ່າງກາຍ, ເມື່ອມີການ « ຕໍ່ສູ້ » ດຸເດືອດໝາກກະດັນຂາຈະ
ແດງແລະເຈັບ, ແຕ່ບໍ່ເປັນຫຽັງປາກບາດດີ, ກະດັນຂາກໍ່ດີ,
ການສີດຢາປ້ອງກັນສ່ວນຫຼາຍລ້ວນແຕ່ແມ່ນສີດແມ່ພະຍາດ
ເຂົ້າໃນຮ່າງກາຍ, ແຕ່ແມ່ພະຍາດເຫຼົ່ານີ້ບໍ່ມີຄວາມສາມາດ

ທໍາລາງຮ່າງກາງ ສິດຢາກັບພະຍາດ ເຂົ້າໄປເພື່ອໃຫ້ເລືອດ ຂາວແອບຕ້ານກັບແມ່ພະຍາດຊະນິດນີ້.

ແລ້ວນາງແພດເວົ້າຕໍ່ວ່າ

— ນ້ອງຊິ່ເວົ້າ ສູ່ພວກອ້າງຟັງ ຕາມຄວາມເຂົ້າໃຈຂອງ ນ້ອງ, ຄໍາຖາມຂອງອ້າງກໍ່ແມ່ນຄວາມສົນໃຈຂອງຄົນທົ່ວໄປ, ຄໍາເຫັນຂອງນ້ອງຈະຊ່ວງໃຫ້ອ້າງເຫັນໄດ້ແງ່ໃດແງ່ໜຶ່ງຂອງ ບັນຫາເທົ່ານັ້ນ, ເພາະວ່າພົນເສງຫາງມັນບໍ່ປະກົດກັບຕາໃນ ທັນໃດ, ສະນັ້ນເຮົາຈຶ່ງບໍ່ຢາກເຊື່ອປານໃດ.

ພໍດີອາງພິນຈາກ... ມາ, ອ້າງນ້ອງເຮັດວຽກຢູ່ນອກພາ ກັບແລ່ນເຂົ້າໃນຖ້ໍາ, ຄືຊູ່ນີ້ແມ່ນເຂົາເຈົ້າຍອກລົມກັບອີກກະ ທົກໃນຖໍ້າ, ແຕ່ມື້ນີ້ໃຜກໍ່ຖືກດູດດຶງຕາມຄວາມເວົ້າຂອງນາງ ແພດ, ນາງແພດນິດຄາວໜຶ່ງແລ້ວເວົ້າຕໍ່ວ່າ

— ນ້ອງສົມມຸດໃຫ້ພວກອ້າງເຫັນວ່າເມື່ອສຸຂະພາບເຮົາ ແຂງແຮງ, ເຖິງວ່າໃນຮ່າງກາງມີພະຍາດແຕ່ມັນກໍ່ບໍ່ສາມາດ ເຮັດໃຫ້ເຮົາເຈັບໄດ້. ແຕ່ຖ້າສຸຂະພາບອ່ອນເພງແມ່ພະຍາດ ກໍ່ຈະລຸກຮືຂຶ້ນໂລດ, ເຮັດໃຫ້ເຮົາເຈັບເປັນ, ບໍ່ຄືສັດຕູຖ້າເຮົາ

ເຜີຕົວມັນກໍ່ບຸກໂຈມຕີເອົາໂລດ.

ສະນັ້ນ, ຢາກມີສຸຂະພາບແຂງແຮງສະເໝີເຮົາຄວນກິນ ຢູ່ສະອາດເພື່ອຈຳກັດບໍ່ໃຫ້ແມ່ພະຍາດເຂົ້າໃນຮ່າງກາຽ. ອີກ ຢ່າງໜຶ່ງກໍ່ໝັ່ນຫັດແອບໃຫ້ຮ່າງກາຽມີຄວາມທົນທານ ດີພ້ອມ ນັ້ນກໍ່ຄວນກິນຢາປ້ອງກັນ. ສັກຢາປ້ອງກັນໃຫ້ສະໝໍ່າສະເໝີ ເພື່ອຊ່ວຽຊູເລືອດຂາວໄດ້ສ່ວນໃດສ່ວນໜຶ່ງ.

ທຸກຄົນມິດຢູ່ຄາວໜຶ່ງ, ພໍດີສຽງຄົນເຈັບຜູ້ຂີ້ດື້ຫວ່າງຢ່າ ນີ້ຮ້ອງຂຶ້ນ :

— ຫັ້ນໆ ຕີລະແມນແມງວັນເທິງໂຕະນັ້ນນາ, ຢ່າໃຫ້ມັນ ຍັງ. ຄົນເຈັບໃຊ້ມັດດອກພາດເປັງບາດໜຶ່ງ! ຕາຽ 5 ໂຕພ້ອມ ບາດ. ໃນຈຳນວນນັ້ນພັດມີແມງວັນໂຕລັກກິນນ້ຳເຜີ້ງນັ້ນອີກ ຈຶ່ງແມ່ນບຸນຫົວໜັງ, ມັນບໍ່ທັນຕາຽຄືຊິແມ່ນຖືກເຈັບໜັກ, ດີ້ນດ່າວໆ ຢູ່ແຕ່ກໍ່ບິນບໍ່ໄດ້, ຄົນເຈັບຜູ້ໜຶ່ງເອົາດອກເຂ່ຽ ມັນລົງດິນ, ແລ້ວທັງຍໍຕີນຢີລົງດິນທັງເວົ້າ :

— ກູຮູ້ມຶງລັກແລ້ວບາດນີ້!

ພິມທີ່ໂຮງພິມມິດຕະພາບ ລາວ – ຈີນ
ຂອງສູນກາງແນວລາວຮັກຊາດ
ພິມຈຳນວນ 30.000 ຫົວ ຂະໜາດ 13×18,4
ພິມແລ້ວວັນທີ່ 15 – 2 – 1974